ໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ຕ່ອງໂສ້ມູນຄ່າອາຫານ
ໃນ ສປປ ລາວ

# ຄູ່ມືແນະນຳ

## ການປັບປຸງລະບົບລ້ຽງງົວພື້ນເມືອງ ເພື່ອຜະລິດເປັນສິນຄ້າ ຢູ່ເມືອງປາກຊ່ອງ



**ສະໜັບສະໜູນ ໂດຍ:**
ອົງການຮ່ວມມືສາກົນ ປະເທດ ຍີ່ປຸ່ນ (JICA)

# ຄຳນຳ

ຄູ່ມືນີ້ ໄດ້ພັດທະນາຂຶ້ນມາໂດຍການຮ່ວມມືຂອງ ທີມງານ ອົງການຮ່ວມມືສາກົນ ປະທດຍີ່ປຸ່ນ ໄຈກາ JICA ສຳລັບໂຄງການ ສ້າງຄວາມເຂັ້ມແຂງໃຫ້ຕ່ອງໂສ້ ມູນຄ່າອາຫານໃນ ສປປ ລາວ. ໃນຄະນະດຽວກັນ, ຄະນະທີມງານວິຊາການ ຍັງໄດ້ເຮັດວຽກຮ່ວມກັບ ອົງກອນພາກລັດທີ່ມີບົດບາດສຳຄັນ ຄື: ກົມສົ່ງເສີມກະສິກຳ ແລະ ສະຫະກອນ, ພະແນກກະສິກຳ ແລະ ປ່າໄມ້ ແຂວງຈຳປາສັກ, ຫ້ອງການກະສິກຳ ປ່າໄມ້ ເມືອງປາກຊ່ອງ, ກົມລ້ຽງສັດ ການປະມົງ ແລະ ຄະນະອານຈານທີ່ມີປະສົບການສູງຈາກມະຫາວິທະຍາໄລ ແຫ່ງຊາດ.

ຈຸດປະສົງ ຂອງບົດແນະນຳສະບັບນີ້ ແມ່ນເພື່ອປັບປຸງຄວາມຮູ້ຄວາມສາມາດ ຂອງພະນັກງານສົ່ງເສີມການລ້ຽງສັດ, ຊາວກະສິກອນຜູ້ລ້ຽງສັດ, ກຸ່ມຜູ້ລ້ຽງສັດ ແລະ ພາກສ່ວນທີ່ມີຄວາມສົນໃຈໃນການລ້ຽງສັດອື່ນໆ ເພື່ອປັບປຸງລະບົບການລ້ຽງສັດໃນແຕ່ລະທ້ອງຖິ່ນ; ການໃຊ້ສຳນວນຄຳສັບໃນເອກະສານແມ່ນລຽບງ່າຍເໝາະສຳລັບພະນັກສົ່ງເສີມກະສິກຳ ຂັ້ນສູນກາງ, ແຂວງ, ເມືອງ ແລະ ສູນ ສະນີບໍລິການເຕັກນິກໃນຝຶກອົບຮົມ ຖ່າຍທອດບົດຮຽນ ໃຫ້ແກ່ ຊາວກະສິກອນຫຼື ກຸ່ມຜູ້ລ້ຽງສັດຂະໜາດນ້ອຍອື່ນໆ. ບໍ່ພຽງແຕ່ເທົ່ານັ້ນ, ເນື້ອໃນເອກະສານຍັງປະກອບດ້ວຍ ຄວາມຮູ້ດ້ານເຕັກນິກ ແລະ ປະສົບການຈາກໂຄງການທົດລອງ ຕ່ອງໂສ້ມູນຄ່າການລ້ຽງງົວ ຢູ່ເມືອງ ປາກຊ່ອງ ແຂວງຈຳປາສັກ, ຈຸດປະສົງ  ກິດຈະກຳ ຮູບແບບ A ເຕັກນິກການລ້ຽງງົວແມ່ຜະລິດລູກ, ຮູບແບບ B. ເຕັກນິກການລ້ຽງງົວລຸ້ນບ່າວສາວ, ຮູບແບບ C. ເຕັກນິກການລ້ຽງງົວ ທອມ ແລະ ຈະມີຜົນປະໂຫຍດຫຼາຍຕໍ່ຜູ້ຊົມໃຊ້.

ທາງຄະນະພວກເຮົາຂໍຂອບໃຈມາຍັງຜູ້ຊົມໃຊ້ຄູ່ມືມືນີ້ທຸກທານ. ຖ້າຫາກ ມີບາງເນື້ອໃນ ຫຼື ຫຼັກໄວຍາກອນ ອາດຂາດຕົກບົກຜ່ອງໃດໆທາງຄະນະຈັດທຳພວກເຮົາຍິນດີຮັບຄຳຕຳນິຕິຊົມຈາກບັນດາທ່ານເພື່ອປັບປຸງຄູ່ມືດັ່ງກ່າວນີ້ໃນຕໍ່ໜ້າໃຫ້ ດີຂຶ້ນເລື້ອຍໆ.

# ສາລະບານ

ໜ້າ


**ຄຳນຳ........................................................................................................ii**
**ສາລະບານ....................................................................................................iii**
1. ສະພາບລວມການລ້ຽງງົວຢູ່ເມືອງປາກຊ່ອງ.......................................................1
2. ຈຸດປະສົງ.....................................................................................................1
3. ພວກເຮົາຈະເລີ່ມຕົ້ນແນວໃດ?.........................................................................1
4. ປັບປຸງລະບົບ ຫຼື ເຕັກນິກການລ້ຽງງົວ..............................................................1
5. ພວກເຮົາຕ້ອງປູກຫຍ້າແນວພັນປັບປຸງ..............................................................5
5.1. ການປູກ, ການຄຸ້ມຄອງ ແລະ ການນຳໃຊ້ພືດອາຫານສັດ.......................................5
5.2. ການຄຸ້ມຄອງທົ່ງຫຍ້າ...................................................................................6
5.3. ການນຳໃຊ້ລ້ຽງງົວ.......................................................................................7
5.4. ການເຮັດຫຍ້າໝັກ.......................................................................................8
5.5. ຄວາມຕ້ອງການກິນຫຍ້າຕໍ່ມື້.........................................................................9
5.6. ການເຮັດອາຫານເສີມ..................................................................................9
6. ຄອກ ແລະ ການສ້າງຄອກງົວ.........................................................................9
7. ການຮັກສາສຸຂະພາບ....................................................................................10
8. ການຕະຫຼາດ.............................................................................................11
9. ຂໍ້ແນະນຳ ແລະ ສິ່ງທີ່ຄວນເອົາໃຈໃສ່...........................................................11
9.1. ຂໍ້ແນະນຳ...............................................................................................11
9.2. ສິ່ງທີ່ຄວນເອົາໃສ່ທີ່ສຸດ..............................................................................11
**ເອກະສານອ້າງອີງ...........................................................................................11**

## 1. ສະພາບລວມການລ້ຽງງົວຢູ່ເມືອງປາກຊ່ອງ

ເມືອງປາກຊ່ອງ ແມ່ນເມືອງນຶ່ງຕັ້ງຢູ່ ທາງພາກຕະວັນອອກສຽງເໜືອຂອງແຂວງ ຈຳປາສັກ. ຫ່າງຈາກເທດສະບານນະຄອນປາກເຊ 50 ກມ. ຕັ້ງຢູ່ພູພຽງບໍລະເວນ ມີເນື້ອທີ່ທັງໝົດ 344,186 ເຮັກຕາ. ໃນນັ້ນມີເນື້ອທີ່ດິນທົ່ງຫຍ້າ ແລະ ຄັງລ້ຽງສັດ 1,427 ເຮັກຕາ ເທົ່າກັບ 0,41%. ທົ່ວເມືອງ ມີງົວ 25,261ໂຕ. ມີຟາມລ້ຽງງົວ 11 ຟາມ. ມີກຸ່ມລ້ຽງງົວ 1 ກຸ່ມ. ມີໂຮງງານຂ້າສັດ 3 ແຫ່ງ (ປາກຊ່ອງ, ກອງຕຸ່ນ ແລະ ຫ້ວຍກອງ). ການບໍລິໂພກຊີ້ນງົວ 6,77 ກິໂລຕໍ່ຄົນຕໍ່ປີ.

ການຜະລິດກະສິກຳຂອງປະຊາຊົນເມືອງປາກຊ່ອງ ຖືເອົາການປູກຝັງເປັນຕົ້ນຕໍ ເຊັ່ນ ກາເຟ, ຊາຕົ້ມນ້ຳ, ໝາກ ແໜ່ງ, ພືດຜັກ ແລະ ອື່ນໆ. ແຮງງານສ່ວນໃຫຍ່ແມ່ນສຸມໃສ່ ການປູກຝັງ. ການລ້ຽງງົວເປັນອາຊີບສຳຮອງ, ລະບົບການລ້ຽງງົວແມ່ນລ້ຽງແບບຄອບຄົວເປັນສ່ວນໃຫຍ່ ຮູບແບບການລ້ຽງປະປ່ອຍຕາມທຳມະຊາດຕາມທົ່ງຫຍ້າ ແລະ ຄັ່ງລ້ຽງງົວ. ບັນຫາທີ່ຊາວກະສິກອນພົບຄື ແນວພັນງົວບໍ່ໄດ້ປັບປຸງ, ບໍ່ໄດ້ປັບປຸງອາຫານ, ບໍ່ໄດ້ມີການຈັດການທົ່ງຫຍ້າ, ບໍ່ໄດ້ເອົາໃຈໃສ່ ການສັກຢາປ້ອງກັນ ແລະ ປິ່ນປົວງົວ, ການຕະຫຼາດບໍ່ມີການວາງແຜນການຜະລິດ ແລະ ແຜນການຕະຫຼາດ.

ປະຈຸບັນທາງເມືອງມີນະໂຍບາຍສົ່ງເສີມການລ້ຽງສັດເປັນສິນຄ້າ ໃນນັ້ນ ກໍມີງົວ ເພື່ອຮັບປະກັນສະບຽງອາຫານ ການບໍລິໂພກພາຍໃນ ແລະ ສະໜອງໃຫ້ແກ່ຕະຫຼາດຕົວເມືອງ ແລະ ເປັນສິນຄ້າ ສົ່ງອອກຕ່າງແຂວງ ມັນມີຄວາມຈຳເປັນຕ້ອງໄດ້ ປັບປຸງລະບົບການລ້ຽງງົວພື້ນເມືອງ ເພື່ອຜະລິດເປັນສິນຄ້າຂອງ ຊາວກະສິກອນເມືອງປາກຊ່ອງ.

## 2. ຈຸດປະສົງ

- ເພື່ອສ້າງຄວາມເຂັ້ມແຂງການພັດທະນາຕ່ອງໂສ້ມູນຄ່າທັງໝົດຂັ້ນຕອນ ຈາກ ຂອດການຜະລິດ, ຂອດການປຸງແຕ່ງ, ຂອດຈໍລະຈອນແຈກຢາຍ ແລະ ຂອດການຕະຫຼາດ.

## 3. ພວກເຮົາຈະເລີ່ມຕົ້ນແນວໃດ?

- ຊາວກະສິກອນຜູ້ລ້ຽງງົວຕ້ອງຫັນປ່ຽນແນວຄິດໃໝ່ ແກ່ໄຂ ຈຸດອ່ອນໃນລະບົບການລ້ຽງແບບ ທຳມະຊາດ
- ປະຕິບັດນະໂຍບາຍສົ່ງເສີມການລ້ຽງງົວ ຂອງລັດຖະບານເປັນໂຕຕັ້ງ, ເອົາຕະຫຼາດເປັນໂຕນຳ, ເອົານະວັດຕະກຳໃໝ່ເປັນໂຕເສີມ ແລະ ຫຼຸດຜ່ອນຕົ້ນທຶນ ເພີ້ມລາຍຮັບໃຫ້ແກ່ຄອບຄົວ.

## 4. ປັບປຸງລະບົບ ຫຼື ເຕັກນິກການລ້ຽງງົວ

1. ຢາກລ້ຽງງົວໄດ້ດີພວກເຮົາຄວນປັບປຸງລະບົບການລ້ຽງງົວ ເພື່ອຜະລິດເປັນສິນຄ້າ

- ຫັນປ່ຽນ ຮູບແບບເຕັກນິກການລ້ຽງງົວແບບທຳມະຊາດ ກະແຈກກະຈາຍ ທີ່ບໍ່ສອດຄ່ອງເໝາະສົມ ມາລ້ຽງໃນຮູບແບບໃໝ່ນຳໃຊ້ນະວັດຕະກຳໃໝ່ ຕ້ອງສຸມໃສ່ ວິທີການລ້ຽງ 3 ໄລຍະ (ຮູບແບບ) ຄື:
  1. ຮູບແບບ ທີ 1. ເອີ້ນວ່າ ໄລຍະການລ້ຽງພໍ່-ແມ່ພັນ ປະສົມພັນ ແລະ ລ້ຽງງົວແມ່ຜະລິດລູກ
  2. ຮູບແບບ ທີ 2. ເອີ້ນວ່າ ໄລຍະການພັດທະນາໂຄງສ້າງຂອງງົວ ລ້ຽງງົວລຸ້ນບ່າວ-ສາວ ງົວຢ່ານົມ
  3. ຮູບແບບທີ 3. ເອີ້ນວ່າ ໄລຍະການລ້ຽງງົວທອມ.



**ພວກເຮົາຕ້ອງ ຢຸດເຊົາຄິດວ່າ:**

1). ງົວພື້ນເມືອງ ລ້ຽງງ່າຍ, ຫາກິນຫຍ້າເກັ່ງ ແລະ ມີຄວາມທົນທານຕໍ່ພະຍາດ.

2). ຄຳວ່າທົ່ງຫຍ້າທຳມະຊາດຍັງກ້ວາງ ເໝາະສົມແກ່ການລ້ຽງງົວ ບໍ່ມີອີກແລ້ວ, ເພາະເນື້ອທີ່ຈະຖືກນຳໃຊ້ໃນການພັດທະນາດ້ານອື່ນໆ.

3). ວິທີການລ້ຽງປ່ອຍຕາມທຳມະຊາດກະແຈກກະຈ່າຍບໍ່ເໝາະສົມ ຈະນັບມື້ຫຼຸດລົງແລ້ວ.

**ພວກເຮົາຕ້ອງຫັນປ່ຽນແນວຄິດໃໝ່ ມາລ້ຽງ 3 ຮູບແບບລຸ່ມນີ້:**

**ໄລຍະປະສົມພັນງົວ**

- **ຮູບແບບ A.** ລ້ຽງງົວແມ່ ຜະລິດລູກ. ຄອບຄົວ, ກຸ່ມ, ສະຫະກອນ, ຟາມຂະໜາດນ້ອຍ, ກາງ ແລະ ຟາມໃຫຍ່,

**ໄລຍະການພັດທະນາ**

- **ຮູບແບບ B:** ລ້ຽງງົວລຸ້ນຢ່ານົມ ບ່າວ/ສາວ ອາຍຸ ແຕ່ 9 ເດືອນ- 24 ເດືອນ.

**ໄລຍະການທອມງົວ**

- **ຮູບແບບ C:** ລ້ຽງງົວທອມ ຜູ້ໃຫຍ່, ອາຍຸ 25-36 ເດືອນ.
- ການຈໍລະຈອນແຈກຢາຍ, ຕະຫຼາດ/ບໍລິໂພກ.
- ປຸງແຕ່ງຜະລິດຕະພັນຊີ້ນ,

- ພວກເຮົາຕ້ອງແກ້ໄຂບັນຫາຮູບແບບວິທີການລ້ຽງແບບປະຖົມປະຖານ ປ່ອຍປະຕາມທໍາທມະຊາດ ຢູ່ເມືອງປາກຊ່ອງ ແຂວງຈໍາປາສັກ.

**ຮູບແບບທີ 1 . ເຕັກນິກການລ້ຽງງົວແມ່ຜະລິດລູກ.**

ແບບດັ້ງເດີມ ແບບເກົ່າປ່ອຍສະຊາຍ



ຮູບແບບໃໝ່ລ້ຽງໃນທົ່ງຫຍ້າປັບປຸງ



**ຮູບແບບທີ 2. ໄລຍະການລ້ຽງງົວພໍ່-ແມ່ພັນ, ປະສົມພັນ, ລ້ຽງແມ່ຜະລິດລູກ.**

ສິ່ງທີ່ຄວນເອົາໃຈໃສ່ໃນຮູບແບບນີ້ ຕ້ອງປູກພືດອາຫານສັດ ກະກຽມອາຫານພຽງພໍໄວ້ກ່ອນ.

- ຮູບແບບໃໝ່ ນໍາໃຊ້ນະວັດຕະກໍາໃໝ່: ນະວັດຕະກໍາໃໝ່ ແມ່ນ ການນໍາໃຊ້ ແນວຄິດອັນໃໝ່, ວິທີການໃໝ່, ເຕັກນິກອັນໃໝ່ ທີ່ສອດຄ່ອງເໝາະສົມກັບຍຸກປະຈຸບັນ.

1. ຜູ້ລ້ຽງງົວຕ້ອງຫັນປ່ຽນແນວຄິດໃໝ່ ເອົາໃຈໃສ່ປູກພືດອາຫານສັດ ຢ່າງໜ້ອຍ ໃນເນື້ອທີ່ 1,1 ເຮັກຕາ ຫຼື ຫຼື ກ່ວານີ້ ຂຶ້ນກັບເງື່ອນໄຂ ແລະ ທ່າແຮງຂອງແຕ່ລະຄອບຄົວ.
2. ປຸກສ້າງຄອກໃຫ້ງົວ ຈະມີຄອກຢູ່ ແລະ ຄອກແຄບ. ມີຮ່າງອາຫານ ແລະ ນໍ້າສະອາດໃຫ້ກິນຕະຫຼອດ.
3. ຄັດເລືອກເອົາງົວແມ່ລູກອ່ອນ ເກີດລູກໃໝ່ ແຍກອອກຈາກຝູງໃຫຍ່ ເຂົ້າໄປລ້ຽງໃນສວນຫຍ້າປັບປຸງ ທີ່ມີແຫຼ່ງອາຫານສັດພຽງພໍ ທັງປະລິມານ ແລະ ຄຸນນະພາບ. ຮັບປະກັນໃຫ້ງົວແມ່ ໄດ້ກິນອາຫນພຽງພໍ ເພື່ອຜະລິດນໍ້ານົມໃຫ້ລູກກິນອີ່ມ.
4. ມີການວາງແຜນການສັກຢາປ້ອງກັນໃຫ້ງົວທຸກໂຕ ຕາມລະດູການ ປີນຶ່ງ ສອງເທື່ອ.
5. ມີການຈັດການທົ່ງຫຍ້າ ແບ່ງເປັນລ໋ອກຍ່ອຍ 4 ລ໋ອກ. ລ້ຽງແບບໝູນວຽນໃຫ້ງົວໄດ້ກິນຫຍ້າທີ່ມີຄຸນຄ່າທາງໂພຊະນາການສູງ ຫຍ້າມີອາຍຸ 45 ວັນ.

6. ລ້ຽງງົວແມ່ຜະລິດລູກ ນັບແຕ່ ອາຍຸເກີດໃໝ່ ຈົນເຖິງ ອາຍຸ 6 ເດືອນ. ງົວລູກຢ່ານົມ ຈະມີນ້ຳໜັກໃນເກນມາດຕະຖານ ເພື່ອເຂົ້າສູ່ ລະບົບການລ້ຽງງົວລຸ້ນ ຢ່ານົມ.

**ຮູບແບບ ທີ 3. ເຕັກນິກການລ້ຽງງົວຢ່ານົມ ງົວລຸ້ນ ບ່າວສາວ.**

- ຈຸດປະສົງ ຂອງຮູບແບບນີ້ ແມ່ນເພື່ອພັດທະນາ ໂຄງຂອງງົວຢ່ານົມ ຫຼື ງົວລຸ້ນໃຫ້ມີການຈະເລີນເຕີບໂຕດີ ເພື່ອເຂົ້າສູ່ຂະບວນການທອມງົວ ໄລຍະສຸດທ້າຍ ໃນຮູບແບບທີ 3 ຫຼື ຂາຍໄປເປັນພໍ່ແມ່ພັນອີງຕາມຄວາມຕ້ອງການຂອງຜູ້ຊື້.

ແບບເກົ່າ



ແບບໃໝ່



ງົວລຸ້ນບ່າວສາວ ຈະລ້ຽງລວມໃນຝູງໃຫຍ່

ວິທີການລ້ຽງແບບໃໝ່ ຄັດເລືອກງົວອອກຈາກຝູງໃຫຍ່ ມາແຍກລ້ຽງສະເພາະ ໃນທົ່ງຫຍ້າປັຍປຸງ ແບ່ງອອກເປັນ 4 ລ໋ອກຍ່ອຍ. ແບ່ງລ໋ອກມີຮົ້ວໄຟຟ້າ.

- ຮູບແບບໃໝ່ ນຳງົວເຂົ້າມາລ້ຽງໃນທົ່ງຫຍ້າປັບປຸງ ລ້ຽງແບບກິນໝູນວຽນ ໄປແຕ່ລະລ໋ອກ ງົວຈະໄດ້ກິນຫຍ້າພຽງພໍ ທັງປະລິມານ ແລະ ຄຸນນະພາບສູງ.
- ວາງແຜນການຮັກສາສຸຂະພາບສັດ. ສັກຢາໃຫ້ຄົບຕາມລະດູການ ແລະ ປ້ອງກັນພະຍາດທີ່ເກີດຂຶ້ນຢູ່ໃນບ້ານ, ເຂດ ແລະ ເມືອງປາກຊ່ອງ.
- ຕອນແລງງົວຈະເຂົ້າຄອກ ກິນອາຫານເສີມ ກ້ອນແຮ່ທາດ ແລະ ອາຫານປະສົມ ກິນຫຍ້າຕັດໃສ່ຮ່າງໃວ້.
- ງົວລຸ້ນຈະລ້ຽງແຕ່ອາຍຸ 6 ເດືອນ ຈົນເຖິງອາຍຸ 2 ປີ ເພື່ອເຂ້າສູ່ ລະບົບການລ້ຽງງົວທອມ.

**ຮູບແບບ ທີ 4. ການລ້ຽງງົວທອມງົວຜູ້.**

- ຈຸດປະສົງເພື່ອພັດທະນາກ້າມຊີ້ນຂອງງົວຕາມທີ່ຕະຫຼາດຕ້ອງການ. ການລ້ຽງງົວໃນຮູບແບບນີ້ ສາມາດປະຕິບັດໄດ້ຫຼາຍວິທີການງົວທີ່ນຳມາລ້ຽງທອມມາຈາກ 3 ແຫຼ່ງຜະລິດຄື: 1). ການທອມງົວຈາກຮູບແບບທີ 2, ສຳລັບຜູ້ທີ່ມີເງື່ອນໄຂ ມີທ່າແຮງໃນການປູກສ້າງເນື້ອທີ່ທົ່ງຫຍ້າຫຼາຍ ຄື ພາຍຫຼັງ ຂະບວນການລ້ຽງໃນຮູບແບບທີ 2 ສຳເລັດ ຄົບຕາມເວລາແລ້ວ ໃຫ້ສືບຕໍ່ເຂົ້າລ້ຽງທອມ ໃນຮູບແບບທີ 3 ເພື່ອໃຫ້ງົວມີນ້ຳໜັກຕາມທີ່ຕະຫຼາດຕ້ອງການ; 2). ການທອມງົວຈ່ອຍຄື ການຄັດເລືອກເອົາງົວໃນຝູງໂຕທີ່ຈ່ອຍມາລ້ຽງທອມໃຫ້ຕຸ້ຍໄດ້ນ້ຳໜັກແລ້ວຂາຍອອກ. 3). ໄປຊື້ງົວຈ່ອຍມາຈາກຟາມ ຫຼື ຈາກຄອບຄົວອື່ນໆ ເຂົ້າມາລ້ຽງທອມໃຫ້ໄດ້ນ້ຳນັກ ແລະ ຂາຍອອກ.

ຮູບແບບເກົ່າລ້ຽງປ່ອຍ.



ຮູບແບບໃໝ່ລ້ຽງທອມ



ງົວລຸ້ນບ່າວສາວ ຈະຖືກລ້ຽງລວມໃນຝູງໃຫຍ່ ໃນລະດູຝົນຈະມີຫຍ້າຫຼາຍ ງົວຈະຕຸ້ຍພີ້ດີ, ແຕ່ເຖິງລະດູແລ້ງ ຫຍ້າທຳມະຊາດ ຈະຕາຍ ງົວກິນຫຍ້າບໍ່ອີ່ມ ເຮັດໃຫ້ງົວຈ່ອຍ ງົວຫາກິນໄກ. ປີ 2024 ເຮັດໃຫ້ງົວເສັຍ ແລະ ຕາຍ ລວມ 17 ໂຕ. ຄິດເປັນມູນຄ່າ 51.000.000 ກີບ.

ລ້ຽງເຄິ່ງຂັງເຄິ່ງປ່ອຍ ຕອນແລງງົວເຂົ້າຄອກໃຫ້ອາຫານເສີມ. ມີກ້ອນແຮ່ທາດໃຫ້ງົວເລັຍກິນຍາມມື້ແລງ.

- **ຮູບແບບໃໝ່ ນຳໃຊ້ເຕັກນິກ ນະວັດຕະກຳໃໝ່**

1. ແນວຄິດເກົ່າ: ການລ້ຽງງົວແມ່ນໃຫ້ມີຈຳນວນຫຼາຍໂຕເພີ້ມຂຶ້ນໃນແຕ່ລະປີ. ຫັນປ່ຽນແນວຄິດໃໝ່: ຜູ້ລ້ຽງງົວຕ້ອງລ້ຽງເພື່ອຂາຍເອົາເງິນ, ລ້ຽງງົວທອມເພື່ອເປັນສິນຄ້າມີການວາງແຜນການຕະຫຼາດກັບຜູ້ຊື້ງົວ ສ້າງລາຍຮັບໃຫ້ແກ່ຄອບຄົວໃນແຕ່ລະປີ.
2. ປູກຫຍ້າແນວພັນປັບປຸງ: ຕ້ອງປູກພືດອາຫານສັດໃຫ້ພຽງພໍ. ປູກຫຍ້າກິນີ ສີມ່ວງ, ຫຍ້າເນເປັຍ ແລະ ຖົ່ວສະໄຕໂລ CIAT 184 ໃນເນື້ອທີ 1,1 ເຮັກຕາ. ຫຼືຫຼາຍກ່ວານີ້ ຂຶ້ນກັບ ເງື່ອນໄຂ ແລະ ທ່າແຮງຂອງແຕ່ລະຄອບຄົວ.
3. ອາຫານ ແລະ ການໃຫ້ອາຫານ. ຮູບແບບນີ້ ລ້ຽງງົວຂັງໃນຄອກ ຕັດຫຍ້າໃຫ້ກິນ ຕາມອັດຕາ 15% ຂອງນໍ້າໜັກຕົວ ຕັດຫຍ້າໃຫ້ກິນຢ່າງພຽງພໍ. ໃຫ້ອາຫານເສີມ ຕ້ອງປະຕິບັດ 4 ຖືກ: “ຖືກສູດ, ຖືກອັດຕາ, ຖືກເວລາ ແລະ ຖືກວິທີ” ເນັດຫຍ້າໝັກ ຫຍ້າແຫ້ງ, ກ້ອນແຮ່ທາດ ວິຕາມິນ ອາຫານເສີມ. ນຳໃຊ້ສິ່ງເສດເຫຼືອຈາກການຜະລິດກະສິກຳ ແລະ ເສດເຫຼືອຈາກໂຮງງານ ອຸດສາຫະກຳ (ຂີ້ເບັ້ຍ, ກາກມັນຕົ້ນ, ການນໍ້າຕານ)
4. ລ້ຽງທອມແບບເຄິ່ງຂັງເຄິ່ງປ່ອຍ. ລ້ຽງທອມໃນທົ່ງຫຍ້າ ແລະ ລ້ຽງທອມໃນຄອກຕັດຫຍ້າໃຫ້ກິນຢ່າງພຽງພໍ ໃຫ້ອີ່ມ ແລະ ໃຫ້ອາຫານເສີມ.
5. ມີການວາງແຜນການສັກຢາປ້ອງກັນ ເປັນປົກກະຕິ.
6. ນຳໃຊ້ກົນຈັກ ແລະ ສິ່ງອຳນວຍຄວາມສະດວກເຂົ້າຊ່ວຍ. (ຮົ້ວໄຟຟ້າ ເພື່ອແບ່ງລ໋ອກຫຍ້າ, ເຄື່ອງຕັດຫຍ້າ ແລະ ເຄື່ອງບົດຫຍ້າ , ຖັງໃສ່ຫຍ້າໝັກ)



ຈັກບົດຫຍ້າ




ຈັກຕັດຫຍ້າ.

2. **ດ້ານອາຫານສັດ.** ພວກເຮົາຕ້ອງແກ້ໄຂບັນຫາອາຫານສັດ ຮັບປະກັນອາຫານສັດໃຫ້ພຽງພໍທັງລະດູຝົນ ແລະ ລະດູແລ້ງ.

ພາບລຸ່ມນີ້ ສະແດງໃຫ້ເຫັນວ່າ ຫຍ້າທຳມະຊາດ ແລະ ຫຍ້າພັນປັບປຸງ ໃນເວລາດຽວກັນ 30/9/2024

ຫຍ້າທຳມະຊາດ



ສວນຫຍ້າປັບປຸງ ຢູ່ບ້ານໜອງກະລີ



➢ ຫຍ້າທຳມະຊາດຈະເລີນເຕີບໄດ້ດີ ແລະ ມີຫຼາຍໃນລະດູຝົນ, ແຕ່ລະດູແລ້ງ ຫຍ້າທຳມະຊາດບາງຊະນິດຈະຕາຍ.
➢ ຫຍ້າແນວພັນປັບປຸງ ຈະເລີນເຕີບໂຕໄດ້ດີ ທັງລະດູຝົນ ແລະ ລະດູແລ້ງ. ມີຄຸນຄ່າທາງໂພຊະນາການ ສູງກວ່າຫຍ້າທຳມະຊາດ.

## 5. ພວກເຮົາຕ້ອງປູກຫຍ້າແນວພັນປັບປຸງ.

### 5.1. ການປູກ, ການຄຸ້ມຄອງ ແລະ ການນຳໃຊ້ພືດອາຫານສັດ.

➢ **ພືດອາຫານສັດແມ່ນຫຍັງ?**

- ພືດອາຫານສັດແມ່ນ ພືດຕະກຸນຫຍ້າ ແລະ ຖົ່ວພືດຕະກຸນຖົ່ວທີ່ສາມາດນຳໃຊ້ເປັນອາຫານສັດໄດ້.
- ຫຍ້າອາຫານສັດຈະໃຫ້ຜົນຜະລິດສູງ ກ່ວາຖົ່ວອາຫານສັດ ແລະ ເປັນອາຫານຫຼັກຂອງສັດກ້ຽວເອື້ອງ ເຊັ່ນ: ຄວາຍ, ງົວ, ແກະ ແລະ ແບ້..
- ຖົ່ວອາຫານສັດຈະໃຫ້ໂປຼຕີນ ຫຼື ທາດຊີ້ນ ຫຼາຍກ່ວາຫຍ້າ. ຍ້ອນຖົ່ວອາຫານສັດເປັນພືດທີ່ສາມາດ
- ດຶງເອົາທາດໄນໂຕຼເຈນ ຈາກອາກາດ ແລະ ປ່ຽນມາເປັນທາດໂປຼຕີນໄດ້.






➢ ພືດອາຫານສັດທີ່ໄດ້ແນະນຳປູກຮ່ວມກັບຄອບຄົວສາທິດ ຢູ່ບ້ານໜອງກະລີ ແລະ ບ້ານບັງລຽງ, ເມືອງປາກຊ່ອງ ແຂວງ ຈຳປາສັກ ມີ:

1). ຫຍ້າ ຣູຊີ (Brachiria ruzizienzis)

2). ຫຍ້າມູລາໂຕ 2. (Brachiria ruzizienzis X B. decumbensX B. Brizanttha)

3). ຫຍ້າ ກີນີ ສີມ່ວງ ( Panicum Maximum Cv. Simuang)

4). ຫຍ້າ ເນເປຍ ປາກຊ່ອງ 1 (ໄທ).(Napier Pakchong 1)

5). ຫຍ້າ ຫວານ ອີ່ສະລາແອນ (Dwarf Napier grass; ຊື່ວິທະຍາສາດ*Pennisetum purpureum*

6). ຫຍ້າ ຊຸບເປີລີບ .

7). ຖົ່ວສະໄຕໂລ CIAT 184

**ກະກຽມເນື້ອທີ່ປູກ.**

1). ບຸກເບີກເນື້ອປູກຫຍ້າ,

2). ໄຖ ຕາກແດດ 1 ອາທິດ ແລະ

3). ອານາໄມ ກິ່ງ, ກ້ານໄມ້ອອກ.

4). ໄຖ-ຄາດ ຫຼື ປັ່ນ ປັບໜ້າດິນໃຫ້ສະໝໍ່າສະເໝີດີ

➢ ກະກຽມແກ່ນຫຍ້າ ແລະ ຖົ່ວອາຫານສັດ ແລະ ທ່ອນພັນ, ການວ່ານແກ່ນ ແລະ ການປູກ

1) ນຳໃຊ້ແກ່ນຫຍ້າ ຣູຊີ+ມູລາໂຕ 2 ໃນອັດຕາສ່ວນປະສົມ 50%/50% ໃຊ້ອັດຕາວ່ານແກ່ນ 2 ກິໂລ ຕໍ່ໄລ່ ແລະ 12 ກິໂລຕໍ່ເຮັກຕາ.
2) ການປູກຫຍ້າເຮັດໄດ້ 2 ວິທີ ຄື: 1. ປູກເປັນແຖວ ໂຮຍແກ່ນຫຍ້າໄປຕາມແຖວ ໄລຍະຫ່າງລະຫ່ວາງແຖວ 50 ຊຕມ; 2. ໃຊ້ແກ່ນວ່ານໄປທົ່ວແປງຫຍ້າ. ໃນການສາທິດໃນຄັ້ງນີ້ ໄດ້ນຳໃຊ້ ວິທີວ່ານແກ່ນ ໄປທົ່ວແປງຫຍ້າ. ວ່ານແກ່ນຫຍ້າລົງດິນບໍ່ຄວນໃຫ້ເລິກເກີນ 1-2 ຊຕມ, ເພາະວ່າ ເມັດຫຍ້າ ນ້ອຍ ເປັນແກ່ນນ້ອຍໆ.
3) ພາຍຫຼັງວ່ານແກ່ນຫຍ້າແລ້ວ ແນະນຳໃຫ້ ນຳໃຊ້ ແຮງງານ 2-3 ຄົນ ເອົາຝົດໄມ້ແກ່ ໃຫ້ທົ່ວ ແປງຫຍ້າເພື່ອໃຫ້ດິນປົກຄຸມແກ່ນຫຍ້າ.
4) ການປູກຫຍ້າເນເປັຍ. ເຮັດໄດ້ສອງວິທີ ຄື 1. ປູກ ອ່ຽງໃຫ້ທ່ອນພັນຝັງລົງດິນ 1 ຂໍ້ ຫຼື 1 ຕາ ປະໃຫ້ພົ້ນໜ້າດິນ 1 ຕາ ແລະ 2. ວິທີປູກນອນ ຄືປູກອ້ອຍ. ແຕ່ໃນການສາທິດ ການປູກໃນຄັ້ງນີ້ ໄດ້ແນະນຳໃຫ້ປູກນອນ ໃຊ້ທ່ອນ ພັນ 2 ທ່ອນຕໍ່ຂຸມ ແລະ ວາງທ່ອນພັນນອນລົງ ເອົາດິນປົກນ້ອຍນຶ່ງໄລຍະຫ່າງລະຫ່ວາງແຖວ 1 ແມັດ, ໄລຍະຂຸມ 70-80 ຊຕມ.

ການປູກຫຍ້າ ຣູຊີ+ຫຍ້າ ມູລາໂຕ 2




## 5.2. ການຄຸ້ມຄອງທົ່ງຫຍ້າ.

- ແມ່ນການຈັດການທົ່ງຫຍ້າທີ່ດີ ຮັບປະກັນບໍ່ໃຫ້ທົ່ງຫຍ້າຖືກທຳລາຍ ແລະ ໃຫ້ມີພຽງພໍທັງລະດູແລ້ງ ແລະ ລະດູຝົນພວກເຮົາຄວນປະຕິບັດດັ່ງນີ້:

1). ພາຍຫຼັງປູກຫຍ້າ ຫຼື ວ່ານແກ່ນຫຍ້າແລ້ວ ໃຫ້ລ້ອມຮົ້ວເພື່ອປ້ອງກັນບໍ່ໃຫ້ສັດອື່ນເຂົ້າໄປທຳລາຍ.



ການປູກຫຍ້າ ເນເປັ້ຍ ປາກຊ່ອງ 1. ຂອງ ທ່ານ ໂພຄຳ ຢູ່ບ້ານບັງລຽງ.

2). ບົດຮຽນຕົວຈິງລະບົບປ່ອຍໃຫ້ກິນໃນທົ່ງຫຍ້າ ຫຼື ແປງຫຍ້າ ທີ່ໄດ້ນຳໃຊ້ຢູ່ບ້ານ ໜອງກາລີ ແລະ ບ້ານບັງລຽງ ປີທຳອິດບໍ່ຄວນນຳງົວ ເຂົ້າໄປລ້ຽງໃນທົ່ງຫຍ້າ ເພາະຈະເຮັດໃຫ້ຫຍ້າຖືກຢຽບຢ່ຳ, ເພາະວ່າລະບົບຮາກຫຍ້າຍັງບໍ່ທັນແຂງແຮງ ແລະ ຮາກຍັງບໍ່ທັນຢັ່ງລົງເລິກ, ແຕ່ເຮົາສາມາດນຳໃຊ້ວິທີຕັດໃຫ້ງົວກິນຢູ່ຄອກ ຫຼື ນອກສວນຫຍ້າໄດ້. ປີທີ່ 2 ຫຍ້າແກ່ນຫຍ້າທີ່ລົ່ນລົງດິນຈະແຕກງອກຈະເລີນເຕີບໂຕດີ ແລະ ເຫງົ້າຫຍ້າຈະແຕກກໍ ແຕກແໜ່ງມີຄວາມໜາແໜ້ນແລ້ວ ຈະມີຄວາມທົນຕໍ່ການຢຽບຢ່ຳໄດ້. ເຮົາຈຶ່ງສາມາດນຳງົວເຂົ້າໄປລ້ຽງໃນແປງຫຍ້າທີ່ແບ່ງເປັນລ໋ອກ.

3). ການຕັດຫຍ້າ ເມື່ອຫຍ້າມີອາຍຸຮອດ 60 ວັນ ເຮົາສາມາດ ຕັດນຳໄປລ້ຽງງົວໄດ້, ການຕັດໃຫ້ສູງຈາກໜ້າດິນ 10 ຊັງຕີແມັດ, ສຳລັບ ພືດຕະກຸນຖົ່ວ ຄື ຖົ່ວສະໄຕໂລ CIAT 184 ໃຫ້ຕັດ ສູງຈາກໜ້າດິນ 20 ຊັງຕີແມັດ, ຖ້າຕັດຕ່ຳ ຈະເຮັດໃຫ້ ຕົ້ນຖົ່ວຕາຍໄດ້. ເພາະຖົ່ວຈະອາໃສ ໃບສັງເຄາະແສງເພື່ອການຈະເລີນເຕີບໂຕ.

4). ຫລັງຈາກການຕັດຫຍ້າ ແລະ ພືດຕະກຸນຖົ່ວແຕ່ລະຄັ້ງໃຫ້ໃສ່ຝຸ່ນຄອກທຸກຄັ້ງ. ເພື່ອຄືນຄວາມອຸດົມສົມບູນໃຫ້ແກ່ພືດອາຫານສັດ.

5). ຄວນກຳຈັດວັດສະພືດ ເຊັ່ນ ຕົ້ນໜາມຜັກຫົມ ແລະ ກິ່ງໄມ້ຕ່າງໆ ອອກຈາກສວນຫຍ້າ.

6). ການຈັດວາງອັດຕາຝູງງົວ ກັບເນື້ອທີ່ທົ່ງຫຍ້າ ບໍ່ຄວນໃຫ້ຫຼາຍເກີນໄປ ແລະ ບໍ່ຄວນປ່ອຍງົວເຂົ້າກິນ ທົ່ງຫຍ້າ ດົນເກີນໄປ ໃຫ້ສັງເກດ ເບິ່ງຕົວຈິງ. ຖ້າປ່ອຍຈຳນວນງົວຫຼາຍເກີນໄປ ແລະ ໃຫ້ງົວກິນຫຍ້າດົນເກີນໄປ ຈະເຮັດໃຫ້ທົ່ງຫຍ້າຖືກຢຽບຢ່ຳ ແລະ ຖືກທຳລາຍໄດ້. ເຈົ້າຂອງງົວ ຕ້ອງສັງເກດເບິ່ງຄວາມເໝາະສົມຕົວຈິງ ຜົນຜະລິດ ຫຍ້າໃນສວນຫຍ້າ.

7). ຖ້າສັງເກດເບິ່ງຜົນຜະລິດຫຍ້າໃນສວນຫຍ້າ ມີໜ້ອຍໃຫ້ຍ້າຍງົວໄປກິນຢູ່ ລ໋ອກໃໝ່ຖັດໄປ.







ສຳລັບຫຍ້າເນເປຍໃຫ້ຕັດຈຳດິນ.



ການໃສ່ຝຸ່ນຄອກພາຍລັງການຕັດຫຍ້າ ທຸກໆຄັ້ງ.

## 5.3. ການນຳໃຊ້ລ້ຽງງົວ.

- ລະບົບຕັດໃຫ້ງົວກິນ. ເມື່ອອາຍຸໄດ້ 60 ວັນພາຍຫຼັງປູກ ໃຫ້ຕັດຫຍ້າ ໄປລ້ຽງງົວ ແລະ ຕັດຮອບຕໍ່ໄປ ທຸກໆ 45 ວັນ. ຮັບປະກັນໃຫ້ງົວໄດ້ກິນຫຍ້າ ອາຍຸ 45 ວັນ ຫຍ້າຈະມີທາດຊີ້ນສູງກວ່າ ການຕັດເວລາອື່ນໆ.
- ລະບົບປ່ອຍໃຫ້ງົວການເອງໃນແປງຫຍ້າ. ແບ່ງທົ່ງຫຍ້າອອກເປັນ 4 ລ໋ອກຍ່ອຍ ລ້ຽງແບບໝູນວຽນ ໄປແຕ່ລະລ໋ອກ. ຮັບປະກັນໃຫ້ງົວໄດ້ກິນຫຍ້າ ອາຍຸ 45 ວັນ ຫຍ້າຈະມີທາດຊີ້ນສູງ ຫຼື ທາດໂປຼຕີນສູງ ງົວຈະເລີນເຕີບໂຕດີ.
- ລະດູຝົນຫຍ້າມີຫຼາຍ ແນະນຳໃຫ້ເຮັດຫຍ້າໝັກ ແລະ ຫຍ້າແຫ້ງໄວ້ໃຫ້ງົວກິນໃນຍາມຂາດແຄນອາຫານ.

- ນອກຈາກຫຍ້າທີ່ປູກແລ້ວ ເຮົາສາມາດ ນຳໃຊ້ສິ່ງເສດເຫຼືອຈາກການຜະລິດກະສິກຳເຊັ່ນຟືອງ, ຕົ້ນຖົ່ວດິນ, ຕົ້ນສາລີຫວານ, ໃບມັນຕົ້ນໜັກ, ມັນຕົ້ນແຫ້ງ, ກາກມັນຕົ້ນແຫ້ງ ແລະ ຂີ້ເບັຍ ເປັນອາຫານງົວໄດ້.



ເຮົາແບ່ງສວນຫຍ້າອອກເປັນ 4 ລ໋ອກຍ່ອຍ ດ້ວຍຮົ້ວໄຟຟ້າ.

ລະບົບການຕັດໃຫ້ງົວກິນ. ຂອງຄອບຄົວທ່ານກົງຕາ ແລະ ທ່ານ ໂພຄຳ



ການຕັດຫຍ້າໃຫ້ງົວກິນ

## 5.4. ການເຮັດຫຍ້າໝັກ.

- ການຖະໜອມ ອາຫານສັດ ດ້ວຍການເຮັດຫຍ້າໝັກໄວ້ໃຫ້ງົວກິນໃນຍາມແລ້ງ



ຕັດ ແລະ ຂົນອອກຈາກສວນມາໃສ່ລົດ

ຕັດຫຍ້າເນເປັຍເປັນທ່ອນ ນ້ອຍໆ 2-3 ຊຕມ.



ໃສ່ກາກນ້ຳຕານ

ຢຽບໃຫ້ແໜ້ນໄລ່ອາກາດອອກ ແລະອັດໃຫ້ແໜ້ນ

ເກັບມ້ຽນໄວ້ໃນງົວກິນໃນ

- ຊາວກະສິກອນຜູ້ລ້ຽງງົວສາມາດນຳໃຊ້ເຕັກນິກການຖະໜອມ ອາຫານສັດ ການເຮັດຫຍ້າໝັກ ໄວ້ໃຫ້ສັດກິນ. ບໍ່ສະເພາະແຕ່ຫຍ້າ. ພວກເຮົາສາມາດ ນຳໃຊ້ ໃບ ແລະ ແໜງມັນຕົ້ນ ມາໝັກໃຫ້ງົວກິນກໍຍິ່ງເປັນການດີທີ່ສຸດ. ເພາະວ່າ ຢູ່ ເມືອງປາກຊ່ອງ ມີຫຼາຍຄອບຄົວ ປູກມັນຕົ້ນ ແຕ່ປີ ເຈົ້າຂອງສວນ ຕັດແໜ່ງມັນຕົ້ນອອກ.
- ສຳລັບການກນ້ຳຕານ ຖ້າບໍ່ມີບໍ່ໃສ່ກໍໄດ້ ໝັກແຕ່ຫຍ້າ ຫຼື ໃບມັນຕົ້ນ ກໍໄດ້.

### 5.5. ຄວາມຕ້ອງການກິນຫຍ້າຕໍ່ມື້.

- ຄວາມຕ້ອງການອາຫານຂອງງົວ ແຕກຕ່າງກັນມັນຂຶ້ນກັບຫຼາຍປັດໃຈເຊັ່ນ: ຂະໜາດ, ນ້ຳໜັກງົວ, ໄລຍະເວລາໃຫ້ຜົນຜະລິດຂອງງົວ.
- ຕົວຢ່າງ: ງົວ 1 ໂຕ ຕ້ອງການກິນຫຍ້າ 15% ຂອງນ້ຳໜັກຕົວ. ຕົວຢ່າງ: ງົວນ້ຳໜັກ 100 ກິໂລ ຕ້ອງກິນອາຫານ 15 ກິໂລຫຍ້າສົດ ຕໍ່ໂຕຕໍ່ມື້. ງົວນ້ຳໜັກ 200 ກິໂລ ກິນຫຍ້າມື້ນຶ່ງ 30 ກິໂລຫຍ້າສົດ.
- ງົວຕ້ອງການກິນຫຍ້າ ແລະ ພືດຕະກຸນຖົ່ວ. ໃນອັດຕາ ຫຍ້າ 3 ສ່ວນຕໍ່ ພືດຕະກຸນຖົ່ວ 1 ສ່ວນ (ຖົ່ວສະໄຕໂລ CIAT 184).

### 5.6. ການເຮັດອາຫານເສີມ.

ກ້ອນແຮ່ທາດອາຫານເສີມແມ່ນຫຍັງ?

ກ້ອນແຮ່ທາດອາຫານເສີມ ແມ່ນ ການລວບລວມເອົາສ່ວນປະກອບຕ່າງ ທີ່ມີຄຸນຄ່າທາງດ້ານອາຫານ ສຳລັບສັດລ້ຽງ ຊຶ່ງຊອກຫາໄດ້ງ່າຍໃນທ້ອງຖິ່ນເພື່ອນຳມາປະກອບເຮັດເປັນກ້ອນ ແລ້ວນຳໄປໃຫ້ສັດກິນ. ກ້ອນແຮ່ທາດອາຫານເສີມ ສາມາດຕອບສະໜອງທາງດ້ານພະລັງງານ. ທາດຊີ້ນ ແລະ ແຮ່ທາດໃຫ້ແກ່ສັດ.



ເອົາສ່ວນປະສົມເທລົງ



ປະສົມໃຫ້ເຂົ້າກັນດີ



ຕຳໃຫ້ແໜ້ນ



ເອົາກ້ອນແຮ່ທາດທີ່ອັດແໜ້ນໄປຕາກ



ຕາກຜຶ່ງລົມໃນຮົ່ມ.

## 6. ຄອກ ແລະ ການສ້າງຄອກງົວ

- **ສະຖານທີການສ້າງຄອກ** ຕ້ອງເລືອກຕັ້ງໃສ່ ດິນໂນນ ຫຼື ບ່ອນສູງເໝາະສົມ.
- **ຄອກງົວ** ແມ່ນປັດໃຈນຶ່ງທີ່ສຳຄັນ ຂອງການລ້ຽງງົວ. ຄອກແມ່ນບ່ອນທີ່ພັກພາອາໃສ ຂອງງົວ. ສະນັ້ນ ຊາວກະສິກອນຜູ້ລ້ຽງງົວ ຕ້ອງເອົາໃຈໃສ່ໃນການສ້າງຄອກຢູ່ຂອງງົວ. ຄອກແບ່ງອອກເປັນ ສອງພາກສ່ວນຄື ຄອກແຄບ ແລະ ຄອກຢູ່ຂອງງົວ.
- **ຄອກແຄບ** ສຳລັບໃວ້ ເປັນບ່ອນສັກຢາ ປ້ອງກັນ, ປິ່ນປົວ ແລະ ຊັ່ງນ້ຳໜັກຂອງງົວ.

- **ຄອກໃຫຍ່ກ້ວາງ ເອີ້ນວ່າ ຄອກລວມ** ເປັນບ່ອນພັກເຊົາ ທີ່ຢູ່ອາໃສ ຂອງງົວ ເວລາ ຝົນຕົກ ແດດຮ້ອນ ແລະ ບ່ອນພັກເຊົາ ເວລາກາງຄືນ. ພາຍໃນຄອກ ຕ້ອງມີຮ່າງອາຫານ ສໍາລັບໃສ່ຫຍ້າ ແລະ ອາຫານປະສົມ. ອ່າງນໍ້າ ຫຼື ຖັງໃສ່ນໍ້າສະອາດມີໄວ້ ຕະຫຼອດໃຫ້ງົວກິນ.




ຮ່າງອາຫານ



ຄອກງົວ

- ຕອນແລງ ງົວຈະພາລູກເຂົ້ານອນໃນຄອກ ແລະ ສະດວກໃນການເກັບເອົາຝຸ່ນຄອກ.

## 7. ການຮັກສາສຸຂະພາບ

1. ງົວເປັນສັດເລືອດອຸ່ນລ້ຽງລູກດ້ວຍນໍ້ານົມຄືກັນກັບຄົນເຮົາ. ພວກເຮົາຕ້ອງໄດ້ເອົາໃຈໃສ່ສັກຢາປ້ອງກັນ ແລະ ປິ່ນປົວເວລາສັດເຈັບ.





ການສັກຢາປ້ອງກັນກັນ

ສິ່ງທີ່ຄວນເອົາໃຈໃສ່ ໃນລະບົບການລ້ຽງງົວ ແບບໃໝ່ ຊາວກະສິກອນຜູ້ລ້ຽງສັດ ຕ້ອງເອົາໃຈໃສ່ຮັກສາສຸຂະພາບງົວ ດ້ວຍການສັກຢາປ້ອງກັນ.

1) ຢາປ້ອງກັນ ພະຍາດ ເຕົ້າໂຮມເລືອດງົວ-ຄວາຍ;
2) ຢາປ້ອງກັນ ພະຍາດປາກເປື່ອຍ ລີ້ງເລັບ.
3) ຢາປ້ອງກັນ ພະຍາດ ໄຂ້ບວມ
4) ຢາປ້ອງກັນພະຍາດ ໄຂ້ຂາແຂງ
5) ຢາປ້ອງກັນ ພະຍາດ ຜິວໜັງອັບເສບ
6) ຢາຖ່າຍພະຍາດ ພາຍໃນ ແລະ ພາຍນອກ.

2. ເຮັດສຸຂານາໄມ ຮ່າງອາຫານ ແລະ ຮ່າງນໍ້າ, ຄອກທີ່ຢູ່ອາໃສ ບໍ່ໃຫ້ເປື້ອນເປິ. ໃຫ້ມ້ຽນຂີ້ງົວເປັນປົກກະຕິ.

3. ຕ້ອງມີຄອກກັກກັນງົວທີ່ຊື້ເຂົ້າມາຈາກແຫຼ່ງອື່ນໆ ຫ້າມບໍ່ໃຫ້ເອົາເຂົ້າລວມຝູງເດັດຂາດ, ຕ້ອງລ້ຽງຢູ່ຄອກກັກກັນສັດຢ່າງໜ້ອຍ 21 ວັນ, ຖ້າວ່າງົວດັ່ງກ່າວ ປົກກະຕິດີ ຈຶ່ງນຳເຂົ້າມາລ້ຽງໃນຝູງ.

## 8. ການຕະຫຼາດ

- ຜູ້ລ້ຽງງົວ ຕ້ອງໄດ້ຫັນປ່ຽນແນວຄິດໃໝ່. ຕ້ອງຮຽນຮູ້ ການວາງແຜນການຜະລິດງົວ ວາງແຜນການຕະຫຼາດ. ປະຕິບັດຄຳຂວັນ **"ລ້ຽງງົວເພື່ອຂາຍເອົາເງິນ"**
- ທັງສາມຮູບແບບການລ້ຽງງົວ ຈະຕ້ອງ ວາງແຜນການຕະຫຼາດ, ວາງແຜນການຂາຍງົວ.
- ຕະຫຼາດງົວລາດ ຫຼື ງົວພື້ນເມືອງ ຂາຍງ່າຍ ລາຄາດີ ທັງພາຍໃນ ແລະ ຕະຫຼາດຊາຍແດນ. ມີຄວາມຕ້ອງການງົວລາດຈາກ ລາວເຮົານັບມື້ເພີ່ມຂຶ້ນ. ຕະຫຼາດທ້ອງຖິ່ນ, ຕົວເມືອງພາຍໃນແຂວງ ແລະ ຕ່າງແຂວງ ຍັງຕ້ອງການງົວເຂົ້າປ້ອນໂຮງງານຂ້າສັດ ນັບມື້ ເພີ່ມຂຶ້ນ.
- ລ້ຽງງົວແມ່ຜະລິດລູກ ເພື່ອຂາຍໃຫ້ຜູ້ທີ່ຕ້ອງການມາຊື້ໄປລ້ຽງຕໍ່.
- ລ້ຽງງົວລຸ້ນບ່າວສາວ ໂຕແມ່ສາວງາມ ຂາຍໃຫ້ຜູ້ຕ້ອງການເອົາໄປລ້ຽງເປັນແມ່ພັນ. ງົວຜູ້ໂຕງາມ ສົມບູນດີ ຂາຍໃຫ້ຜູ້ຕ້ອງການມາຊື້ໄປລ້ຽງເປັນພໍ່ພັນຄຸມຝູງ ຢູ່ບ້ານອື່ນ. ໂຕຜູ້ຂາຍໃຫ້ພໍ່ຄ້າ ງົວປີ້ນ. ຂາຍໃຫ້ຜູ້ມາຊື້ໄປລ້ຽງທອມ ເພື່ອໃຫ້ໄດ້ໂຄງສ້າງໃຫຍ່ ເພີ່ມນ້ຳໜັກ.
- ຜູ້ລ້ຽງງົວທອມຕ້ອງວາງແຜນການຂາຍ ໃຫ້ຊັດເຈນ ຈະລ້ຽງທອມ 75 ມື້ ແລ້ວຂາຍອອກ ຫຼື ລ້ຽງທອມ 3- 4 ເດືອນຂາຍເຂົ້າໂຮງງານຊ້ຳສັດ ພາຍໃນເມືອງ ແລະ ຂາຍອອກໄປຕ່າງແຂວງ.
- ການປຸງແຕ່ງ ຢູ່ເມືອງປາກຊ່ອງ ມີໂຮງຂ້າສັດ 3 ແຫ່ງ ໃນແຕ່ລະມື້ໄດ້ ບໍລິການ ຂ້າສັດ ຂໍ້າປ້ອນຕະຫຼາດໃນຕົວເມືອງແລະ ກຸ່ມບ້ານ. ນອກຈາກນັ້ນຍັງມີ ຕະຫຼາດຕົວເມືອງໃຫຍ່ ແລະ ຕະຫຼາດຕ່າງແຂວງ ມີຄວາມຕ້ອງການຫຼາຍ ໂດຍສະເພາະ ຢູ່ ນະຄອນຫຼວງວຽງຈັນ.

## 9. ຂໍ້ແນະນຳ ແລະ ສິ່ງທີ່ຄວນເອົາໃຈໃສ່

### 9.1. ຂໍ້ແນະນຳ

1. ແກ້ໄຂບັນຫາອາຫານງົວໃນລະດູແລ້ງ ໃຫ້ 1). ປູກຫຍ້າເນເປັຍປາກຊ່ອງ. 2). ຫຍ້າ ຫວານອີ່ສະລາແອນ. 3). ຫຍ້າຊຸບເປີລີບ. 4). ຫຍ້າຈຸນຊາວ ຂອງຈີນ.
2. ເຮັດຫຍ້າມັກ ແລະ ໃບມັນຕົ້ນໝັກໄວ້ໃຫ້ງົວກິນ.
3. ນຳໃຊ້ສິ່ງເສດເຫຼືອຈາກການຜະລິດກະສິກຳ ແລະ ເສດເຫຼືອຈາກໂຮງງ່ານອຸດສາຫະກຳ ເຊັ່ນ ຂີ້ເບັຍ ແລະ ກາກມັນຕົ້ນ ມາເຮັດອາຫານເສີມໃຫ້ແກ່ງົວ.
4. ເຖິງວ່າ ຈະມີໂຄງການສະໜັບສະໜູນດີ, ມີພະນັກງານວິຊາການຊຳນານງານຈາກ ສູນກາງ, ແຂວງ ແລະ ພະນັກງານສົ່ງເສີມເມືອງທີ່ເກັ່ງ ມາແນະນຳດ້ານວິຊາການ ຕິດຕາມໃກ້ສິດ, ໄປທັດສະນະສຶກສາ ຫຼາຍໆ ບ່ອນ ຝຶກອົບຮົມໃຫ້ຫຼາຍໆເທື່ອ, ແຕ່ວ່າຊາວກະສິກອນບໍ່ເອົາໃຈໃສ່ກໍ່ບໍ່ເກີດຜົນ. ສະນັ້ນ, **ຊາວກະສິກອນຜູ້ລ້ຽງງົວຕ້ອງເປັນເຈົ້າການໃນການຕັດສິນໃຈ ເຮັດທຸກຂັ້ນຕອນ.**

### 9.2. ສິ່ງທີ່ຄວນເອົາໃສ່ທີ່ສຸດ.

1. ຕ້ອງວາງແຜນການປ້ອງກັນພະຍາດໃຫ້ດີທີ່ສຸດ, ຕ້ອງເອົາໃຈໃສ່ແທ້ໆ ການສັກຢາປ້ອງກັນໃຫ້ງົວທຸກໂຕ ໃຫ້ຄົບທຸກຢາວັກຊີນເພື່ອປ້ອງກັນພະຍາດທີ່ມັກເກີດຂຶ້ນ ຢູ່ເມືອງປາກຊ່ອງ.

## ເອກະສານອ້າງອີງ

1. ເວີນເນີ ສະເຕືອ ແລະ ປີເຕີຣອນ. 2001. ການພັດທະນາ ເຕັກໂນໂລຊີ ພືດອາຫານສັດຮ່ວມກັບຊາວກະສິກອນ. ACIAR Monograph No. 58.
2. ພອນປະເສີດ ເພັງສະຫວັນ. 2014. ຄູ່ມື ການຫອມງົ້ວ.
3. ຣສ. ປອ ວຽງສະກຸນ ນາປະສິດ. ນາງ. ອໍລະຍາ ດວງພະຈັນ. 2022. ຄູ່ມື ການລ້ຽງງົ້ວ (ຫອມງົ້ວ).
4. ຫ້ອງການກະສິກຳ ແລະ ປ່າໄມ້ ເມືອງປາກຊ່ອງ ບົດສະຫຼຸບງວດ IV. 2023.

**ພັດທະນາໂດຍ:**

ກົມສົ່ງເສີມກະສິກຳ ແລະ ສະຫະກອນ, ກະຊວງກະສິກຳ ແລະ ປ່າໄມ້
ໂຄງການ ສ້າງຄວາມເຂັ້ມແຂງໃຫ້ແກ່ຕ່ອງໂສ້ມູນຄ່າອາຫານ ຢູ່ ສປປ ລາວ

ນະຄອນຫຼວງວຽງຈັນ, ສປປ ລາວ
ກະຊວງ ກະສິກຳ ແລະ ປ່າໄມ້
ກົມສົ່ງເສີມກະສິກຳ ແລະ ສະຫະກອນ
ໂທ: 021 732072, ແຟັກ: 021 730072
ຕິດຕໍ່: ພະແນກສົ່ງເສີມປຸງແຕ່ງ ແລະ ໂພຊະນາການ
ອີເມວໂຄງການ: lao.fvc.project@gmail.com